**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ແຂວງຄຳມ່ວນ** ເລກທີ 10 /ຈຂ

ຄຳມ່ວນ, ວັນທີ 27 ກັນຍາ 2024

# ແຈ້ງການ

**ເຖິງ: ບັນດາເມືອງ 10 ຕົວເມືອງ, ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ບັນດາບໍລິສັດ, ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາເຄື່ອນໄຫວ ຢູ່ແຂວງຄຳມ່ວນ.**

**ເລື່ອງ: ການຂຶ້ນທະບຽນອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານໂຟນີ (Walkie/Talkie) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ຢູ່ພາຍໃນແຂວງຄຳມ່ວນ.**

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- **ອີງຕາມ**. ກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ສະບັບເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;
- **ອີງຕາມ** ໜັງສືສະເໜີຂອງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ສະບັບເລກທີ 743/ພຕສ, ລົງວັນທີ 13 ກັນຍາ 2024.

ເຈົ້າແຂວງໆຄຳມ່ວນ ຂໍແຈ້ງມາຍັງບັນດາທ່ານເຈົ້າເມືອງ 10 ຕົວເມືອງ, ບັນດາພະແນກການ, ອົງການທຽບເທົ່າອ້ອມຂ້າງແຂວງ, ບໍລິສັດ, ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມາເຄື່ອນໄຫວ ຢູ່ແຂວງຄຳມ່ວນ ທີ່ມີອຸປະກອນສື່ສານໂຟນີ (Walkie/Talkie) ແລະ ເຄື່ອງບິນບໍ່ ມີຄົນຂັບ (Drone) ທີ່ ມີໄວ້ໃນການຄອບຄອງ ຫຼື ມີຄວາມຕ້ອງການຈະນຳໃຊ້ ໃນການເຄື່ອນໄຫວວຽກງານ, ກິດຈະການ, ທຸລະກິດຕ່າງໆຢູ່ແຂວງຄຳມ່ວນ ໃຫ້ປະຕິບັດດັ່ງນີ້:

1. ການຄອບຄອງ ຫຼື ການນຳໃຊ້ອຸປະກອນສື່ສານໂຟນີ (Walkie/Talkie) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານເຕັກນິກ ແລະ ອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຕາມແຜນຜັງຄື້ນຄວາມຖີ່ແຫ່ງຊາດກ່ຽວກັບຄື້ນຄວາມຖີ່ວິທະຍຸສື່ສານ ແນ່ໃສ່ຮັບປະກັນການຈັດຕັ້ງປະຕິບັດວຽກງານຄວາມໝັ້ນຄົງຂອງຊາດ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;
2. ທຸກພາກສ່ວນທີ່ ມີຈຸດປະສົງນຳໃຊ້ ອຸປະກອນສື່ສານໂຟນີ (Walkie/Talkie) ແລະ ເຄື່ອງບິນບໍ່ມີຄົນຂັບ(Drone) ຕ້ອງໄດ້ຍື່ນຄຳຮ້ອງຂໍອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່

ວິທະຍຸສື່ສານ ຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ຫຼັງຈາກໄດ້ຮັບອະນຸຍາດແລ້ວ ຈຶ່ງນໍາໃຊ້ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ພາກສ່ວນທີ່ມີການຄອບຄອງ ແລະ ນໍາໃຊ້ອຸປະກອນສື່ສານໂຟນີ (Walkie/Talkie) ແລະ ເຄື່ອງບິນບໍ່ມີຄົນຂັບ (Drone) ໂດຍບໍ່ໄດ້ຮັບອະນຸຍາດແມ່ນໃຫ້ຮີບຮ້ອນໄປແຈ້ງຂຶ້ນທະບຽນ ແລະ ຍື່ນຄໍາຮ້ອງຂໍອອກໃບອະນຸຍາດນໍາໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ຈາກພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ **ພາຍໃນ 30 ວັນ** ນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ (ສໍານັກງານພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ຕັ້ງຢູ່ຖະໜົນເລກທີ 13 ໃຕ້, ບ້ານສີວິໄລ, ເມືອງທ່າແຂກ, ໂທລະສັບ/ແຟັກ: 051 214160, 020 78955198), ຖ້າກາຍກໍານົດເວລາດັ່ງກ່າວ ເມື່ອວິຊາການທີ່ກ່ຽວຂ້ອງລົງກວດກາພົບເຫັນມີການລັກລອບນໍາໃຊ້ ຈະໄດ້ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຮອງເຈົ້າແຂວງ

**+ບ່ອນສົ່ງ:**

- ພະແນກ ຕສ ແຂວງ 01 ສະບັບ.
- ບັນດາເມືອງ 10 ເມືອງໆລະ 01 ສະບັບ.
- ບັນດາພະແນກການ, ອົງການຈັດຕັ້ງຕ່າງໆ 01 ສະບັບ.
- ບັນດາບໍລິສັດ, ຫ້າງຮ້ານບ່ອນລະ 01 ສະບັບ.
- ເກັບມ້ຽນ 01 ສະບັບ.

ປອ ສິນສະອາດ ອຸ່ນສິດາ